ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ
ທີ່ ປັກກິ່ງ ສປ ຈີນ

# <u>ໂທລະສານທາງລັດຖະການ</u>

<u>ເຖິງ</u>: ກະຊວງການຕ່າງປະເທດ (ກົມ ອປອ) ທີ່ <u>ນະຄອນຫຼວງວຽງຈັນ</u>.
<u>ຈາກ</u>: ສະຖານເອກອັກຄະລັດຖະທູດ ສປປ ລາວ ທີ່ <u>ນະຄອນຫຼວງປັກກິ່ງ</u>.
<u>ເລກທີ</u>: 41 /21/ສລຈ, ລົງວັນທີ 15 ມັງກອນ 2021.

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳ ສປ ຈີນ ຂໍຖືເປັນກຽດລາຍງານມາຍັງ ກະຊວງການຕ່າງປະເທດຊາບວ່າ ກົມພິທີການທູດຂອງກະຊວງການຕ່າງປະເທດຈີນ ໄດ້ສົ່ງໜັງສືທາງການ ຫາ ສະຖານທູດເຮົາ ສະບັບເລກທີ 11, ລົງວັນທີ 8 ມັງກອນ ກ່ຽວກັບ ມາດຕະການເຂັ້ມງວດໃນການນຳເຂົ້າສິນຄ້າປະເພດອາຫານແຊ່ແຂງ ດັ່ງມີລາຍລະອາດລຸ່ມນີ້:

***ໜຶ່ງ,*** ບັນດາປະເພດສິນຄ້າອາຫານແຊ່ແຂງ ໃນເວລານຳເຂົ້າມາດ່ານພາສີຢູ່ຊາຍແດນ ທີ່ບັນຈຸໃນຕູ້ສິ່ງສິນຄ້າ ຈະຕ້ອງມີການນຳເອົາຕົວຢ່າງໄປກວດເຊື້ອພະຍາດ ແລະ ຂ້າເຊື້ອພະຍາດກ່ອນທຸກຄັ້ງ.

***ສອງ,*** ສຳລັບລົດບັນທຸກຂົນສົ່ງສິນຄ້າກໍ່ຕ້ອງມີການຂ້າເຊື້ອພະຍາດຕາມລະບຽບຫຼັກການ. ສ່ວນສຳລັບເຄື່ອງທີ່ເປັນວັດຖຸອັນຕະລາຍທາງເຄມີ, ສະບຽງອາຫານ, ອາຫານສັດ, ປຸ໋ຍ ແລະ ອື່ນໆ ທີ່ບໍ່ສາມາດທຳການຂ້າເຊື້ອໄດ້ ຫຼື ປະເພດສິນຄ້າທີ່ບໍ່ມີການຫຸ້ມຫໍ່ ຫຼື ປະເພດສິນຄ້າທີ່ຫຸ້ມຫໍ່ ແຕ່ງ່າຍໃນການເກີດການເປິເປື້ອນຈາກໃນເວລາຂ້າເຊື້ອ, ຊຶ່ງບັນດາສິນຄ້າເຫຼົ່ານັ້ນ ຈະບໍ່ໄດ້ມີການດຳເນີນການຂ້າເຊື້ອດ້ວຍນ້ຳຢາຂ້າເຊື້ອ.

***ສາມ,*** ຂັ້ນຕອນການກວດເຊື້ອພະຍາດ ແລະ ການຂ້າເຊື້ອພະຍາດດ້ວຍນ້ຳຢາຂ້າເຊື້ອ ຕໍ່ສິນຄ້າປະເພດອາຫານແຊ່ແຂງ ແມ່ນຈະປະຕິບັດຕາມລະບຽບຫຼັກການຂອງຝ່າຍຈີນ ຄື: ລະບຽບ ວ່າດ້ວຍ ການຂ້າເຊື້ອຮອບດ້ານຕໍ່ສິນຄ້າປະເພດອາຫານແຊ່ແຂງ, ແຈ້ງການຂອງກົມໃຫຍ່ພາສີແຫ່ງຊາດຈີນ ສະບັບເລກທີ 103 ຂອງປີ 2020 ແລະ ອື່ນໆ.

ບັນດາມາດຕະການເຫຼົ່ານັ້ນ ຈະຖືກປະຕິບັດໂດຍບັນດາດ່ານພາສີຕ່າງໆ, ກົມ ຕມ, ບັນດາພາກສ່ວນກ່ຽວຂ້ອງຂອງບັນດາແຂວງທີ່ມີຊາຍແດນຕິດກັບຕ່າງປະເທດ ແລະ ອື່ນໆ, ຊຶ່ງລາຍລະອາດສາມາດເຂົ້າເບິ່ງໃນເວບໄຊຂອງຄະນະກຳມະທິການສາທາລະນະສຸກ ແລະ ສຸຂະພາບແຫ່ງຊາດຈີນ ແລະ ກົມໃຫຍ່ພາສີແຫ່ງຊາດຈີນ.

ດັ່ງນັ້ນ, ສະຖານທູດ ຈຶ່ງຂໍລາຍງານມາຍັງ ກະຊວງ ເພື່ອຊາບ ແລະ ປະສານໄປຍັງພາກສ່ວນກ່ຽວຂ້ອງຂອງຝ່າຍລາວຊາບ ຕາມທາງຄວນດ້ວຍ, ສົ່ງມາພ້ອມນີ້ ໜັງສືທາງການຂອງກົມພິທີການທູດ ກະຊວງການຕ່າງປະເທດຈີນ ສະບັບພາສາຈີນ. (ຈົບ)

---

<u>ຈັດສົ່ງຖືກຕ້ອງ</u>

ຫົວໜ້າຫ້ອງການສະຖານທູດ

ທອງສະຫວັນ ເພຍເທບ
ອັກຄະລັດຖະທູດທີ່ປຶກສາ

# 中 华 人 民 共 和 国 外 交 部

（2021）部边字第11号

老挝人民民主共和国驻华大使馆：

中华人民共和国外交部向老挝人民民主共和国驻华大使馆致意，并谨就中方在冬、春季节期间对包括经陆地边境口岸在内的进口货物实施检测和预防性消毒措施相关事宜通报如下：

一、考虑到冬、春季节气温较低，新冠肺炎病毒易于跨境传播。中方将在冬、春季节对进口非冷链集装箱货物实施检测和预防性消毒。有关措施将包括且不限于：对进口集装箱货物进行抽样检测；对进口载物集装箱在掏箱卸货作业时进行消毒；对进口空集装箱在装运货物、清理维护作业时实施预防性消毒。

二、对于厢式货车及其装载货物外包装的检测和预防性消毒工作参照上述进行。对危险化工品、粮食、饲料及饲料添加剂等不适宜实施消毒的商品及无外包装或外包装易造成消毒液体渗透污染的商品，不实施货物预防性消毒。

三、对于冷链货物集装箱的检测、消毒工作仍按照中

方《进口冷链食品预防性全面消毒方案》、海关总署公告二〇二〇年第103号等既有方式处理。

以上措施由中方海关、移民等部门和边境省（区）政府、相关生产经营单位负责具体实施，详见中国国家卫生健康委员会及海关总署网站。

为保障中老两国之间正常的贸易往来与产业合作，中方建议老方采取必要措施，配合中方做好对出入境货物的检测和消毒工作，防止疫情跨境传播，并共同维护好陆地边境口岸的正常货运功能。

顺致崇高的敬意。

中华人民共和国外交部

二〇二一年一月八日于北京